01

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ — ເລກທີ 0005 /ກປ

ນະຄອນຫຼວງວຽງຈັນ, ວັນທີ 09 JAN 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຄຸ້ມຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2006;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ປົກປັກຮັກສາ ແລະການປະສານງານການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້.

### ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ການນຳເຂົ້າ, ການຊື້-ຂາຍ, ການສົ່ງອອກຄືນ, ການມີໄວ້ໃນຄອບຄອງ, ການຄຸ້ມຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 2. ເຄື່ອງຈັກຕັດໄມ້**

ເຄື່ອງຈັກຕັດໄມ້ ແມ່ນເຄື່ອງຈັກທຸກຊະນິດທີ່ໃຊ້ຕັດໄມ້, ປາຕົ້ນໄມ້ ແລະບັ່ນທ່ອນໄມ້ ລວມມີຈັກທີ່ແລ່ນດ້ວຍເຊື້ອເພີງ (ນ້ຳມັນ) ແລະຈັກທີ່ແລ່ນດ້ວຍໄຟຟ້າ ໂດຍໄດ້ຂຶ້ນທະບຽນ ແລະໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກຂະແໜງກະສິກຳ ແລະປ່າໄມ້ ຕາມລະບຽບກົດໝາຍ.

**ມາດຕາ 3. ຫຼັກການ**

ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້ ຕ້ອງຮັບປະກັນບັນດາຫຼັກການພື້ນຖານ ດັ່ງນີ້:

1. ເຄື່ອງຈັກຕັດໄມ້ທຸກເຄື່ອງທີ່ຈະນຳໃຊ້ໃນ ສປປ ລາວ ຕ້ອງໄດ້ຮັບການຂຶ້ນທະບຽນນຳຂະແໜງກະສິກຳ ແລະປ່າໄມ້ ແລະຕ້ອງຮັບປະກັນ "ໜຶ່ງທະບຽນຕໍ່ ໜຶ່ງເຄື່ອງຈັກ";

2. ການນຳເຂົ້າ ຫຼືສົ່ງອອກຄືນເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງໄດ້ຮັບການເຫັນດີຈາກກະຊວງກະສິກຳ ແລະປ່າໄມ້ກ່ອນ ຈຶ່ງສາມາດນຳເຂົ້າ ຫຼືສົ່ງອອກຄືນໄດ້ບົນພື້ນຖານການດຸ່ນດ່ຽງພາຍໃນ;
3. ການນຳເຂົ້າ, ສົ່ງອອກຄືນ, ຊື້-ຂາຍ, ມີໄວ້ໃນຄອບຄອງ ແລະການນຳໃຊ້ເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງບົນພື້ນຖານການຕິດຕາມ, ກວດກາ ຂອງເຈົ້າໜ້າທີ່ປ່າໄມ້ເປັນແຕ່ລະໄລຍະ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ແລະຜູ້ປະກອບການກ່ຽວການນຳເຂົ້າ, ຊື້-ຂາຍ, ສົ່ງອອກຄືນ, ມີໄວ້ໃນຄອບຄອງ, ນຳໃຊ້ເຄື່ອງຈັກຕັດໄມ້, ສ່ວນປະກອບ ແລະອຸປະກອນ ຢູ່ໃນ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້

**ມາດຕາ 5. ການຄຸ້ມຄອງ ແລະນຳໃຊ້ເຄື່ອງຈັກຕັດໄມ້**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ຕ້ອງການດຳເນີນກິດຈະການຊື້-ຂາຍເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ຕ້ອງໄດ້ຮັບການເຫັນດີທາງດ້ານເຕັກນິກວິຊາການຈາກຂະແໜງກະສິກຳ ແລະປ່າໄມ້; ສຳລັບຜູ້ທີ່ມີໄວ້ໃນຄອບຄອງ ກໍຕ້ອງໄດ້ນຳໄປແຈ້ງ ຂຶ້ນທະບຽນນຳຂະແໜງການກະສິກຳ ແລະປ່າໄມ້.

ເຄື່ອງຈັກຕັດໄມ້ທີ່ໄດ້ນຳເຂົ້າມາແລ້ວ ຕ້ອງນຳເອກະສານໄປແຈ້ງຕໍ່ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເພື່ອຂຶ້ນທະບຽນອະນຸຍາດໃຫ້ນຳໃຊ້.

ກ່ອນຈະນຳໃຊ້ເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງໄດ້ແຈ້ງຈຸດປະສົງຕໍ່ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເພື່ອກວດກາ ແລະຕິດຕາມ.
ເວລານຳໃຊ້ ຫຼືເຄື່ອນຍ້າຍເຄື່ອງຈັກຕັດໄມ້ແຕ່ລະຄັ້ງ ຕ້ອງຖືທະບຽນເຄື່ອງຈັກນັ້ນໆໄປພ້ອມ ເພື່ອສະດວກໃນການຕິດຕາມກວດກາຂອງເຈົ້າໜ້າທີ່ປ່າໄມ້.

ສຳລັບເຄື່ອງຈັກຕັດໄມ້, ລວມທັງອາໄຫຼ່ ຫຼືສ່ວນປະກອບ ທີ່ນຳເຂົ້າມາເພື່ອຮັບໃຊ້ໂຄງການຕ່າງໆທີ່ລັດຖະບານອະນຸມັດ ຫຼືມີສັນຍາຮ່ວມກັນນັ້ນ ຕ້ອງໄດ້ປະຕິບັດຕາມການຕົກລົງລະຫວ່າງສອງຝ່າຍບົນພື້ນຖານ ການຕິດຕາມກວດກາດ້ານເຕັກນິກຈາກຂະແໜງກະສິກຳ ແລະປ່າໄມ້.

**ມາດຕາ 6. ການຂຶ້ນທະບຽນເຄື່ອງຈັກຕັດໄມ້**

ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາອອກທະບຽນອະນຸຍາດໃຫ້ນຳໃຊ້.

ສຳລັບເຄື່ອງຈັກຕັດໄມ້ທີ່ໄດ້ນຳເຂົ້າ, ມີໄວ້ໃນຄອບຄອງ ແລະນຳໃຊ້ໃນໄລຍະຜ່ານມາ ທີ່ຍັງບໍ່ມີໃບທະບຽນແມ່ນໃຫ້ໄປຂຶ້ນທະບຽນນຳພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໃຫ້ສຳເລັດພາຍໃນປີ 2012.